ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===== 000 =====

ກະຊວງການເງິນ

ຫ້ອງການກະຊວງ

1924---

ເລກທີ _____/ກງ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 05 AUG 2016

# ແຈ້ງການ

**ເຖິງ : - ທ່ານ ຫົວໜ້າພະແນກການເງິນປະຈຳແຂວງ;**

**- ທ່ານ ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ;**

**ເລື່ອງ :** ເຂົ້າຮ່ວມກອງປະຊຸມວິຊາການ ງົບປະມານ ແລະ ຄັງເງິນແຫ່ງຊາດທົ່ວປະເທດ ປະຈຳ ສົກປີ 2015-2016

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 618/ກງ. ລົງວັນທີ 03 ມີນາ 2014 ວ່າດ້ວຍ ຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 2401/ກງ, ລົງວັນທີ 27 ກໍລະກົດ 2016 ວ່າດ້ວຍການອະນຸມັດເປີດກອງປະຊຸມວິຊາການຮ່ວມ ລະຫວ່າງຄັງເງິນ ແລະ ງົບປະມານ ທົ່ວປະເທດ ສົກປີ 2015 - 2016.

ເພື່ອເປັນການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານງົບປະມານ-ຄັງເງິນປະຈຳ 10 ເດືອນຕົ້ນສົກປີ 2015-2016 ຜ່ານມາ ແລະ ກະກຽມປິດສະຫຼຸບບັນຊີງົບປະມານ-ຄັງເງິນ, ກະກຽມຍົກຍອດບັນຊີຄັງເງິນ ແລະ ປິດສະຫຼຸບຂາດຕົວ ງົບປະມານແຫ່ງລັດ ໃຫ້ສຳເລັດຕາມແຜນການ. ທັງເປັນການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດງົບປະມານໄລຍະ ຂ້າມຜ່ານ 03 ເດືອນທ້າຍປີ 2016 ຕາມແຜນສະພາທີ່ໄດ້ຮັບຮອງ ໃຫ້ບັນລຸຜົນສຳເລັດ.

## ຫົວໜ້າຫ້ອງການ ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ມອບໃຫ້ຫົວໜ້າພະແນກການເງິນປະຈຳແຂວງ, ຫົວໜ້າຫ້ອງງົບປະມານແຂວງ, ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ ສະຫຼຸບຕີລາຄາຮອບດ້ານ ການຈັດຕັ້ງ ປະຕິບັດວຽກງານງົບປະມານ-ຄັງເງິນໃນ 10 ເດືອນ, ຄາດຄະເນ 02 ເດືອນທ້າຍ ແລະ ທິດທາງປີ 2017.
2. **ເປົ້າໝາຍຜູ້ເຂົ້າຮ່ວມກອງປະຊຸມ:**

- ຫົວໜ້າ ຫຼື ຮອງຫົວໜ້າ ພະແນກການເງິນປະຈຳແຂວງ, ນະຄອນຫຼວງ 01 ທ່ານ; ຫົວໜ້າ ຫຼື ຮອງຫົວໜ້າຫ້ອງ ງົບປະມານປະຈຳແຂວງ 01 ທ່ານ; ວິຊາການງົບປະມານແຂວງ 01 ທ່ານ ແລະ ພະນັກງານຂັບລົດ 01 ທ່ານ; ລວມເປັນ 04 ທ່ານ.

- ຫົວໜ້າ ຫຼື ຮອງຫົວໜ້າ ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ 01 ທ່ານ; ຫົວໜ້າ ຫຼື ຮອງຫົວໜ້າຫ້ອງບັນຊີ ແລະ ຂໍ້ມູນຂ່າວສານ 01 ທ່ານ; ຫົວໜ້າ ຫຼື ຮອງຫົວໜ້າຫ້ອງບໍລິການ 01 ທ່ານ; ຫົວໜ້າຫ້ອງ ຫຼື ຮອງຫົວໜ້າຫ້ອງ ຈັດຕັ້ງບໍລິຫານ-ກວດການິຕິກຳ 01 ທ່ານ; ຄັງເງິນເມືອງ 03 ສ້າງ 02 ທ່ານ (ເມືອງໃນເທດສະບານ + ເມືອງນອກເທດສະບານ) ແລະ ພະນັກງານ ຂັບລົດ 02 ທ່ານ; ລວມເປັນແຂວງລະ 08 ທ່ານ. (ສະເພາະ 04 ເມືອງໃນນະຄອນຫຼວງ ເມືອງລະ 01 ທ່ານ).

3. ກອງປະຊຸມຈະໄດ້ຈັດຂຶ້ນໃນ **ວັນທີ 17-19 ສິງຫາ 2016 ທີ່ຫໍປະຊຸມສູນ ITC ຫຼັກ 5** ໂດຍການເປັນປະທານຂອງ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ.
4. ຄ່າໃຊ້ຈ່າຍໃນການເດີນທາງ ໄປ-ກັບ ແລະ ກິນຢູ່ພັກເຊົາ ແມ່ນນຳໃຊ້ງົບປະມານຂອງກະຊວງການເງິນ.
5. ກອງປະຊຸມຈະໄດ້ຈັດຂຶ້ນເປັນເວລາ 03 ວັນ, ແຕ່ວັນທີ 17-19 ສິງຫາ 2016. (ລາຍລະອຽດມືວາລະກອງປະຊຸມຂັດຕິດມາພ້ອມນີ້).

- ສຳລັບມື້ທີ່ 01: ວັນທີ 17/08/2016 ແມ່ນກອງປະຊຸມຮ່ວມລະຫວ່າງກົມງົບປະມານແຫ່ງລັດ ແລະ ຄັງເງິນແຫ່ງຊາດ, ເປົ້າ ໝາຍຜູ້ເຂົ້າຮ່ວມແມ່ນບັນດາແຂກທີ່ຖືກເຊີນ.
- ສຳລັບມື້ທີ່ 02 ແລະ 03: ວັນທີ 18-19/08/2016 ໄດ້ແຍກອອກເປັນສອງກອງປະຊຸມຄື:

+ **ກອງປະຊຸມວິຊາການ ກົມງົບປະມານແຫ່ງລັດ** ເປົ້າໝາຍຜູ້ເຂົ້າຮ່ວມແມ່ນ (1) ບັນດາຜູ້ແທນອ້ອມຂ້າງສູນກາງ; (2) ບັນດາພະແນກການເງິນແຂວງ ແລະ ງົບປະມານແຂວງ.

+ **ກອງປະຊຸມວິຊາການ ຄັງເງິນແຫ່ງຊາດ** ເປົ້າໝາຍຜູ້ເຂົ້າຮ່ວມແມ່ນ ຄັງເງິນແຫ່ງຊາດສູນກາງ, ຄັງເງິນແຫ່ງຊາດທ້ອງຖິ່ນ ແລະ ບັນດາຜູ້ແທນອ້ອມຂ້າງສູນກາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຫົວໜ້າພະແນກການເງິນແຂວງ, ຫົວໜ້າຫ້ອງງົບປະມານແຂວງ, ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ, ຄັງເງິນເມືອງ 04 ເມືອງໃນຂອງນະຄອນຫຼວງ ເພື່ອຮັບຊາບ ແລະ ກະກຽມເຂົ້າຮ່ວມຕາມກຳນົດເວລາ.

**ຫົວໜ້າຫ້ອງການ ກະຊວງການເງິນ**

ກະຊວງການເງິນ ຫ້ອງການ

ສົມບູນ ອິນທະປັດຖາ

ໝາຍເຫດ: 1) ວັນທີ 17/8/2016 ແຕ່ງກາຍຊຸດສາກົນ;
2) ວັນທີ 18/8/2016 ແຕ່ງກາຍຊຸດສຸພາບ; (ພະນັກງານຄັງເງິນໃສ່ເຄື່ອງແບບ).
3) ວັນທີ 19/8/2016 ແຕ່ງກາຍຊຸດສຸພາບ;

ວາລະກອງປະຊຸມ ງົບປະມານ ແລະ ຄັງເງິນແຫ່ງຊາດ ສົກປີ 2015-16,

ລະຫວ່າງວັນທີ 17-19 ສິງຫາ 2016 ທີ່ ສູນໄອຊີທີຊີ ຫຼັກ 5, ນະຄອນຫຼວງວຽງຈັນ

**ມື້ທີ 01:** (ກອງປະຊຸມຮ່ວມ ລະຫວ່າງ ກົມງົບປະມານແຫ່ງລັດ ແລະ ຄັງເງິນແຫ່ງຊາດ)

| ວັນ, ເວລາ | ເນື້ອໃນລາຍການກອງປະຊຸມ | ຜູ້ຮັບຜິດຊອບ |
|---|---|---|
| 17 ສິງຫາ 2016 | ພາກເຊົ້າ | |
| 8:00 - 8:30 | ລົງທະບຽນ | ກອງເລຂາ |
| 8:30 - 8:40 | ກ່າວຈຸດປະສົງ ແລະ ສະເໜີແຂກຜູ້ເຂົ້າຮ່ວມ | ທ່ານ ປອ ແສນສັກ ສຸລິສັກ<br>ຮອງຫົວໜ້າກົມງົບປະມານ |
| 8:40 - 9:10 | ກ່າວເປີດກອງປະຊຸມຢ່າງເປັນທາງການ ແລະ ໃຫ້ທິດຊີ້ນຳກອງປະຊຸມ | ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ,<br>ລັດຖະມົນຕີກະຊວງການເງິນ |
| 9:40 - 10:00 | ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ 10 ເດືອນ ປະຈຳສົກປີ 2015-16, ທິດທາງ 2 ເດືອນທ້າຍສົກ, ງົບປະມານ 3 ເດືອນທ້າຍ ປີ 2016 ແລະ ວາງທິດທາງແຜນງົບປະມານແຫ່ງລັດ ປີ 2017. | ທ່ານ ສົມສັກ ສິດທິເດຊາ<br>ຮັກສາການຫົວໜ້າກົມງົບປະມານແຫ່ງລັດ. |
| 9:10 - 9:40 | ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານຄັງເງິນແຫ່ງຊາດ 10 ເດືອນ, ທິດທາງ 2 ເດືອນທ້າຍສົກປີ ແລະ ງົບປະມານ 3 ເດືອນທ້າຍປີ 2016. | ທ່ານ ປອ ພູທະນູເພັດ ໄຊສົມບັດ<br>ຫົວໜ້າຄັງເງິນແຫ່ງຊາດ |
| 10:00 - 10:20 | *ຖ່າຍຮູບຮ່ວມກັບທ່ານຮອງນາຍົກລັດຖະມົນຕີ*<br>**ພັກຜ່ອນດື່ມນ້ຳຊາ-ກາເຟ** | |
| 10:20 - 10:40 | ບົດແນະນຳ ການປິດບັນຊີງົບປະມານ, ບັນຊີຄັງເງິນ, ກວດກາສູນໂມງ ແລະ ສະຫຼຸບຂາດຕົວສົກປີ 2015-16, ງົບປະມານຂ້າມຜ່ານ 3 ເດືອນທ້າຍປີ 2016. | ທ່ານ ນາງ ຍອດ ແພງສົມບັດ<br>ຮອງຫົວໜ້າຄັງເງິນແຫ່ງຊາດ |
| 10:40 - 11:00 | ແນະນຳການປິດສະຫຼຸບງົບປະມານແຫ່ງລັດເບື້ອງຕົ້ນ 2015-2016. | ທ່ານ ນາງ ບົວສະຫວັນ ວົງພະຈັນ<br>ຮອງຫົວໜ້າກົມງົບປະມານ |
| 11:00 - 11:40 | ປະກອບຄຳເຫັນ ໃສ່ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ຄັງເງິນ ແລະ ວຽກງານງົບປະມານ ສົກປີ 2015-16, ງົບປະມານຂ້າມຜ່ານ 03 ເດືອນທ້າຍປີ 2016 ແລະ ທິດທາງ ສົກປີ 2017.<br>*(ປະກອບຄຳເຫັນ ພາກສ່ວນລະ 10 ນາທີ)*<br>- ບັນຫາພົ້ນເດັ່ນ ການເກັບລາຍຮັບ, ການຈັດຕັ້ງປະຕິບັດລາຍຮັບ-ຈ່າຍວິຊາການ.<br>- ການປະຕິບັດລາຍຈ່າຍ ຖືເປັນບຸລິມະສິດຂອງລັດຖະບານ.<br>- ບາງບົດຮຽນໃນການປະຕິບັດ ການເບີກຈ່າຍເງິນເດືອນ ຂອງຂະແໜງການສາຍຕັ້ງ (ຂໍ້ສະດວກ, ຫຍຸ້ງຍາກ ແລະ ມາດຕະການແກ້ໄຂ).<br>- ບັນຫາອື່ນໆ ທີ່ພົ້ນເດັ່ນແທ້ໆ. | ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມ :<br>- ພະແນກການເງິນນະຄອນຫຼວງ<br>- ບັນດາພະແນກການເງິນແຂວງ<br>- ກະຊວງສຶກສາ<br>- ກະຊວງ ສາທາລະນະສຸກ<br>- ກະຊວງພາຍໃນ<br>- ສານປະຊາຊົນ<br>- ກະຊວງການເງິນ<br>- ອົງການໄອຍະການ<br>- ກະຊວງປ້ອງກັນຄວາມສະຫງົບ<br>ແລະ ກະຊວງອື່ນໆ |
| ພັກທ່ຽງ ( ຮັບປະທານອາຫານ ຢູ່ສະຖານທີ່ຫ້ອງປະຊຸມ ) | | |
| 17/08/2016 | ພາກບ່າຍ | |
| 13:30 – 14:00 | - ຕີລາຄາປະເມີນຜົນ ແລະ ຖອດຖອນບົດຮຽນ ກ່ຽວກັບ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ການກຳນົດເງິນສົດແຮຄັງ ຂອງຫົວໜ່ວຍງົບປະມານ.<br>- ກະກຽມການປະຕິບັດການບັນຊີຄູ່ ຂອງອົງການຈັດຕັ້ງລັດ ໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍ ການບັນຊີ. | ທ່ານ ພຸດທະຂັນ ຂັນຕີ ຫົວໜ້າພະແນກ, ຄັງເງິນແຫ່ງຊາດ<br>ທ່ານ ໜູເຊັຍ ພົມສີຈັນ ຫົວໜ້າພະແນກ, ກົມບັນຊີ |
| 14:00 – 15:00 | ສືບຕໍ່ປະກອບຄຳເຫັນ ໃນຫົວຂໍ້ພາກເຊົ້າ ແລະ ຫົວຂໍ້ພາກບ່າຍ | ຜູ້ເຂົ້າຮ່ວມປະຊຸມ |
| **15:00 – 15:15** | **ພັກຜ່ອນດື່ມນ້ຳຊາ-ກາເຟ** | |
| 15:51 – 15:40 | ສືບຕໍ່ປະກອບຄຳເຫັນ | ຜູ້ເຂົ້າຮ່ວມປະຊຸມ: |
| 15:40 – 16:00 | ປິດກອງປະຊຸມ ມື້ທີ 1 | ທ່ານ ປອ ພູທະນູເພັດ ໄຊສົມບັດ<br>ຫົວໜ້າຄັງເງິນແຫ່ງຊາດ |

## ມື້ທີ 02: (ກອງປະຊຸມ ສະເພາະຄັງເງິນແຫ່ງຊາດ)

| ວັນ, ເວລາ | ເນື້ອໃນລາຍການກອງປະຊຸມ | ໝາຍເຫດ |
|---|---|---|
| **18 ສິງຫາ 2016** | **ພາກເຊົ້າ** | |
| 7:30 - 8:00 | ລົງທະບຽນ | ກອງເລຂາ |
| 8:00 - 8:20 | ບັນຫາພົ້ນເດັ່ນ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະຄັງເງິນ ສົກປີ 2015-16 ແລະ ບັນດາມາດຕະການແກ້ໄຂສະເພາະໜ້າ. | ທ່ານ ນາງ ວັນພອນ ພົມມະສອນ ຮອງຫົວໜ້າຄັງເງິນແຫ່ງຊາດ |
| 8:20 – 8:40 | 1. ກິ່ງຈັກການຈັດຕັ້ງຄັງເງິນແຫ່ງຊາດ ປະຈຳ ແຂວງ, ນະຄອນຫຼວງ ແລະ ເມືອງ ຕາມຂໍ້ຕົກລົງ 1638/ກງ.ຄງຊ. | ທ່ານ ສຸກສະເຫຼີມ ເຮືອງຄຳໄຊ ຫົວໜ້າພະແນກຈັດຕັ້ງ-ບໍລິຫານ |
| 8:40 - 9:00 | 2. ວຽກງານກອດກາ-ນິຕິກຳ ແລະ ຜ່ານຄຳແນະນຳ ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ຄັງເງິນແຫ່ງຊາດ (ສະເພາະມາດຕາ 15 ຂໍ້ 4). | ທ່ານ ນາງ ບຸດສະດີ ຄຳມະນີວົງ ຫົວໜ້າພະແນກກອດກາ-ນິຕິກຳ |
| 9:00 – 9:20 | 3. ທົບທວນ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ ຢູ່ພະແນກບໍລິການ, ກົນໄກທັນເປັນທັນສະໄໝໃນການຄຸ້ມຄອງລາຍຮັບ-ລາຍຈ່າຍ ຜ່ານລະບົບ Smart Tax, Easy tax, RTGS ແລະ Smart cash. | ທ່ານ ນາງ ທອງຈັນ ສຸລິນພູມີ ຫົວໜ້າ ພະແນກບໍລິການ |
| 9:20 – 9:35 | 4. ການຈັດຕັ້ງປະຕິບັດວຽກງານກອດກາລາຍຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ອື່ນໆ ຂອງຫົວໜ່ວຍງົບປະມານສູນກາງ. | ທ່ານ ນາງ ບົວເລີງຄົນ ດວງສະຫວັນ ຮັກສາການຫົວໜ້າ ພະແນກກອດກາລາຍຈ່າຍງົບປະມານ |
| 9:30 – 10:00 | **ປະກອບຄຳເຫັນ:**<br>- ຍົກບາງບົດຮຽນການຈັດຕັ້ງປະຕິບັດກົນໄກຄຸ້ມຄອງລາຍຮັບ ຜ່ານລະບົບ **Smart Tax** ຢູ່ດ່ານພາສີສາກົນ, **Easy Tax** ຢູ່ນະຄອນຫຼວງວຽງຈັນ). | ຄັງເງິນນະຄອນຫຼວງວຽງຈັນ |
| **10:00 – 10:20** | **ພັກຜ່ອນດື່ມນ້ຳຊາ-ກາເຟ** | |
| 10:40 – 11:30<br>(ພາກສ່ວນ 15 ນາທີ) | **ສືບຕໍ່ປະກອບຄຳເຫັນ:**<br>- ວຽກງານຈັດຕັ້ງ-ພະນັກງານ : ການສະເໜີແຕ່ງຕັ້ງ, ຍົກຍ້າຍ, ການປະຕິບັດນະໂຍບາຍເລື່ອນຊັ້ນ-ຂັ້ນເງິນເດືອນ ແລະ ການບຳລຸງສ້າງພະນັກງານ-ລັດຖະກອນ.<br>- ງົບປະມານ ແລະ ເຄື່ອງຮັບໃຊ້ວຽກງານວິຊາສະເພາະຂອງຄັງເງິນ ຕາມລະບົບສາຍຕັ້ງ.<br>- ລາຍງານສະພາບການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ຂັ້ນແຂວງ ແລະ ເມືອງ (ກົນໄກ ແລະ ວິທີການປະຕິບັດ, ຜ່ານເອກະສານບັນຊີຄັງເງິນເດືອນ, ການເບີກຈ່າຍຕົວຈິງ ແລະ ອື່ນໆ)<br>- ບາງບົດຮຽນ ພົ້ນເດັ່ນ ການຫັນເມືອງກຸ້ມຕົນເອງດ້ານລາຍຮັບ-ລາຍຈ່າຍ.<br>- ການສົ່ງບົດສະຫຼຸບ ລາຍງານຕົວເລກລາຍຮັບ-ລາຍຈ່າຍ ປະຈຳອາທິດ ແລະ ເດືອນ (ເມືອງ ຫາ ແຂວງ, ແຂວງ-ສູນກາງ).<br>- ການສະສາງບັນຊີທ້າຍປີ, ການຍົກຍອດບັນຊີ ເພື່ອເຄື່ອນໄຫວໃນສົກປີ ແລະ ໃບດຸ່ດ່ຽງ ທົກທ້ອງ ຂອງຄັງເງິນເມືອງ, ຄັງເງິນແຫ່ງຊາດປະຈຳແຂວງ ແລະສັງລວມທົ່ວແຂວງ .<br>- ການປະຕິບັດລາຍຈ່າຍ ຖືເປັນບຸລິມະສິດ: ລາຍຈ່າຍເງິນເດືອນ, ບໍລິຫານ, ຊື້ໃໝ່, ລົງທຶນຂອງລັດ, ລາຍຈ່າຍລ່ວງໜ້ານອກແຜນ-ໃນແຜນ ແລະ ວິທີການແກ້ໄຂໃນຕໍ່ໜ້າ. | <br>ນະຄອນຫຼວງວຽງຈັນ, ຈຳປາສັກ, ຫຼວງນ້ຳທາ ແລະ ແຂວງວຽງຈັນ<br>ໄຊຍະບູລີ, ເຊກອງ, ຜົ້ງສາລີ<br>ແຂວງສະຫວັນນະເຂດ, ບໍ່ແກ້ວ, ອຸດົມໄຊ ແລະ ແຂວງຫົວພັນ<br>ແຂວງໄຊຍະບູລີ, ບໍລິຄຳໄຊ ແລະ ແຂວງຫຼວງນ້ຳທາ.<br>ແຂວງ ຫຼວງພະບາງ, ວຽງຈັນ, ໄຊສົມບູນ ແລະ ສະຫວັນນະເຂດ.<br>ແຂວງ ຄຳມ່ວນ, ບໍ່ແກ້ວ, ຫົວພັນ, ຈຳປາສັກ ແລະ ນະຄອນຫຼວງ<br>ແຂວງອັດຕະປື, ແຂວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງເຊກອງ. |
| **ພັກທ່ຽງ: ຮັບປະອາຫານ ຕາມອັດຕະຍາໃສ** | | |
| **18 ສິງຫາ 2016** | **ພາກບ່າຍ** | |
| 13:30 –14:00 | ສະເໜີທາບທາມ ຮ່າງປຶ້ມຄູ່ມືການບັນຊີຄັງເງິນແຂວງ, ນະຄອນຫຼວງ ແລະ ຄັງເງິນເມືອງ. | ທ່ານ ນາງ ການ ສີງທາວົງໄຊ ຫົວໜ້າພະແນກບັນຊີສັງລວມ. |
| 13:00 –15:00 | ສືບຕໍ່ປະກອບຄຳເຫັນ ຫົວຂໍ້ພາກເຊົ້າ ແລະ ພາກບ່າຍ: | |

| | | |
|---|---|---|
| | - ບາງບັນຫາການຄຸ້ມຄອງວຽກງານການບັນຊີ ເຊັ່ນ: ການລົງບັນຊີລາຍຮັບ-ລາຍຈ່າຍ ຂອງບັນດາເມືອງ ໃນລະບົບ GFIS, ການປິດບັນຊີ ແລະ ການສະຫຼຸບລາຍງານ (ຫົວໜ້າຫ້ອງບັນຊີສັງລວມ ຂອງແຕ່ລະແຂວງ ຂຶ້ນສະເໜີແລກປ່ຽນ).<br>- ຂັ້ນຕອນການບັນທຶກບັນຊີ ຂອງວຽກງານລາຍຮັບງົບປະມານແຫ່ງລັດ (ການເຊື່ອມຕໍ່ GFIS ກັບ ສ່ວຍສາອາກອນ). (ໃຫ້ຫົວໜ້າຫ້ອງບໍລິການ(ໃໝ່)/ລາຍຮັບ-ເງິນສົດ(ເກົ່າ) ຂອງແຕ່ລະແຂວງ ຂຶ້ນສະເໜີແລກປ່ຽນ). | ນະຄອນຫຼວງ, ແຂວງຄໍາມ່ວນ, ແຂວງ ຫຼວງນໍ້າທາ, ແຂວງຜົ້ງສາລີ ແລະ ແຂວງວຽງຈັນ<br>ແຂວງ ບໍລິຄໍາໄຊ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈໍາປາສັກ |
| **15:00 – 15:15** | **ພັກຜ່ອນດື່ມນໍ້າຊາ-ກາເຟ** | |
| 15:15 – 16:00 | ປະກອບຄໍາເຫັນ:<br>- ຂັ້ນຕອນການເດີນເອກະສານລາຍຈ່າຍງົບປະມານ (ການຮັບຮູ້ໜີ້, ການດຶງສະໂນດໃຫ້ແຕ່ລະໜ່ວຍງານ, ການກະກຽມສິ່ງໄປຈ່າຍ: ຢູ່ເງິນສົດ ແລະ ຈ່າຍຜ່ານທະນາຄານ, ການປິດ ບັນຊີ ແລະ ການສ້າງເອກະສານລາຍງານ (ໃຫ້ ຫ້ອງບໍລິການ(ໃໝ່)/ຫ້ອງບັນຊີສັງລວມ(ເກົ່າ) ຂຶ້ນ.<br>ປິດກອງປະຊຸມ ມື້ທີ 2 | ແຂວງຫຼວງນໍ້າທາ, ຊຽງຂວາງ, ວຽງຈັນ, ນະຄອນຫຼວງ, ສາລະວັນ ແລະ ເຊກອງ.<br>ປະທານກອງປະຊຸມ |

*ໝາຍເຫດ: ເວລາ 17:00-18:30 ໂມງ ເຄື່ອນໄຫວກິດຈະກໍາ ແຂ່ງຂັນກິລາມິດຕະພາບ, ຄັງເງິນແຫ່ງຊາດສູນກາງ ແລະ ຄັງເງິນແຫ່ງຊາດປະຈໍາແຂວງ, ນະຄອນຫຼວງວຽງຈັນ.*

## ມື້ທີ 03: (ຝຶກອົບຮົມ ວຽກງານຄັງເງິນ)

| ວັນ, ເວລາ | ລາຍການກອງປະຊຸມ | ໝາຍເຫດ |
|---|---|---|
| **19 ສິງຫາ 2016** | **ພາກເຊົ້າ** | |
| 8:00 – 8:30 | ລົງທະບຽນ | ກອງເລຂາ |
| 8:30 – 9:20 | ແນະນໍາການນໍາໃຊ້ລະຫັດບັນຊີດຽວ ທີ່ເປັນເອກະພາບຕາມສາລະບານໃໝ່ | ກົມບັນຊີ, ກະຊວງການເງິນ |
| 9:20 – 9:50 | ແນະນໍາ ວິທີການ ແລະ ຂັ້ນຕອນ ການປ້ອນຕົວເລກລາຍຮັບ-ລາຍຈ່າຍ ເຂົ້າຕາຕະລາງປິດສະຫຼຸບ 00 ໂມງ ແລະ ຂາດຕົວ ງົບປະມານສົກປີ 2015-2016. | ທ່ານ ນິເວດ ຟອງແສງແກ້ວ ຮອງຫົວໜ້າພະແນກ ບັນຊີ-ສັງລວມ |
| 9:50 – 10:00 | ປະກອບຄໍາເຫັນ | ຜູ້ເຂົ້າຮ່ວມປະຊຸມ |
| **10:00 – 10:15** | **ພັກຜ່ອນດື່ມນໍ້າຊາ-ກາເຟ** | |
| 10:15 – 11:30 | ສືບຕໍ່ປະກອບຄໍາເຫັນ | ຜູ້ເຂົ້າຮ່ວມປະຊຸມ |
| **ພັກທ່ຽງ: ຮັບປະທານ ຕາມອັດຕະຍາໃສ** | | |
| | ພາກບ່າຍ | |
| 13:30 – 14:10<br>14:10 – 15:00 | ແນະນໍາການໃຊ້ລະຫັດບັນຊີໃໝ່ ໃນລະບົບ GFIS ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ການສະສາງບັນຊີທ້າຍປີ ແລະ ຍົກຍອດບັນຊີ ເພື່ອໄປເຄື່ອນໄຫວບັນຊີ 3 ເດືອນທ້າຍປີ 2016 ແລະ ປີ 2017.<br>ປະກອບຄໍາເຫັນ | ທ່ານ ສີວິໄຊ ອາມິນ ຮອງຫົວໜ້າພະແນກຂໍ້ມູນ-ຂ່າວສານ<br>ຜູ້ເຂົ້າຮ່ວມປະຊຸມ |
| **15:00 – 15:15** | **ພັກຜ່ອນດື່ມນໍ້າຊາ-ກາເຟ** | |
| 15:15 – 15:30<br>15:30 – 15:45 | ສືບຕໍ່ປະກອບຄໍາເຫັນ<br>ທົບທວນຄືນ, ແກ້ຂໍ້ຂ້ອງໃຈ ແລະ ເອກະພາບ ຕໍ່ເນື້ອໃນກອງປະຊຸມ | ຜູ້ເຂົ້າຮ່ວມປະຊຸມ<br>ຄະນະຮັບຜິດຊອບກອງປະຊຸມ |
| 15:45 – 16:00 | ປິດການຝຶກອົບຮົມຢ່າງເປັນທາງການ | ທ່ານ ພູທະນູເພັດ ໄຊສົມບັດ ຫົວໜ້າຄັງເງິນແຫ່ງຊາດ |
| | *ບັນດາທ່ານຜູ້ແທນດີນທາງກັບ ດ້ວຍຄວາມສະຫວັດດີພາບ*<br>*ຂອບໃຈ* | |